# ຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ປະສິດທິພາບການຜະລິດກະສິກຳ ກໍລະນີສຶກສາ: ຊາວກະສິກອນຜູ້ປູກສາລີ ຢູ່ແຂວງອຸດົມໄຊ

**ຜູ້ຂຽນ: ຈັນທະສຸກ ລາດສະອາດ[1], ອານັນທະລາ ນະຄຽງຈັນ, ມຸກດາວັນ ເພຍຣາດ, ທອນມີ ແກ້ວກິນນາລີ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

*[1]**ຜູ້ຮັບຜິດຊອບ:** ຈັນທະສຸກ ລາດສະອາດ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ໃນການສຶກສາຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນ ຕໍ່ປະສິດທິພາບການຜະລິດກະສິກຳ ກໍລະນີສຶກສາ: ຊາວກະສິກອນຜູ້ປູກສາລີຢູ່ແຂວງອຸດົມໄຊ. ມີຈຸດປະສົງເພື່ອ ສຶກສາຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນ ຕໍ່ປະສິດທິພາບການຜະລິດກະສິກຳຂອງຊາວກະສິກອນຜູ້ປູກສາລີ. ເກັບກຳຕົວຈິງດ້ວຍແບບສອບຖາມຈາກກຸ່ມຕົວຢ່າງທີ່ເປັນຊາວກະສິກອນຜູ້ປູກສາລີ ຢູ່ແຂວງອຸດົມໄຊທັງໝົດຈຳນວນ 396 ຄົນ, ນຳໃຊ້ແບບຈຳລອງການວິເຄາະການຫໍ່ຫຸ້ມຂໍ້ມູນ ເພື່ອຄິດໄລ່ຄ່າປະສິດທິພາບທາງດ້ານເຕັກນິກ ແລະ ເຮັດການວິເຄາະຄວາມສຳພັນຂອງການເຂົ້າເຖິງແຫຼ່ງເງິນທຶນກັບປະສິດທິພາບການປູກສາລີດ້ວຍແບບຈຳລອງໂປຣບິດ. ຜົນການສຶກສາພົບວ່າ: ປັດໄຈດ້ານຊົນເຜົ່າ, ການເຂົ້າເປັນສະມາຊິກກຸ່ມການຜະລິດ, ທີ່ຕັ້ງຢູ່ບ້ານກິ່ວຫຍາບ, ກຳມະສິດໃນຊັບສິນນອກການກະສິກຳ, ເພດ, ອາຍຸ ແລະ ໄພພິບັດທຳມະຊາດນ້ຳຖ້ວມ ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງຊາວກະສິກອນຜູ້ປູກສາລີ ຢູ່ແຂວງອຸດົມໄຊ ດ້ວຍລະດັບຄວາມສຳຄັນທາງສະຖິຕິ, ສຳລັບປັດໄຈຈຳນວນສະມາຊິກໃນຄອບຄົວ, ເນື້ອທີ່ດິນກະສິກຳ, ທີ່ຕັ້ງຢູ່ບ້ານໂພນໄຊ ແລະ ທີ່ຕັ້ງຢູ່ບ້ານສາມກະ ແມ່ນບໍ່ມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນ. ຜົນການວິເຄາະຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ປະສິດທິພາບການຜະລິດ ດ້ວຍແບບຈຳລອງໂປຣບິດພົບວ່າ ການເຂົ້າເຖິງແຫຼ່ງເງິນທຶນໄດ້ສົ່ງຜົນກະທົບຕໍ່ປະສິດທິພາບການຜະລິດຂອງຊາວກະສິກອນຜູ້ປູກສາລີຢູ່ແຂວງອຸດົມໄຊ ໃນທິດທາງບວກ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05, ໂດຍຜົນການວິເຄາະຜົນກະທົບສ່ວນເພີ່ມຊີ້ໃຫ້ເຫັນວ່າຖ້າຊາວກະສິກອນຜູ້ປູກສາລີຢູ່ແຂວງອຸດົມໄຊສາມາດເຂົ້າເຖິງແຫຼ່ງເງິນທຶນໄດ້ ຈະເຮັດໃຫ້ໂອກາດທີ່ຈະມີປະສິດທິພາບໃນການຜະລິດເພີ່ມສູງຂຶ້ນເຖິງ 12.08% ເມື່ອປຽບທຽບກັບຊາວກະສິກອນຜູ້ປູກສາລີຢູ່ແຂວງອຸດົມໄຊທີ່ບໍ່ສາມາດເຂົ້າເຖິງແຫຼ່ງເງິນທຶນ

**ຄຳສັບສຳຄັນ**: ການເຂົ້າເຖິງແຫຼ່ງເງິນທຶນ, ຊາວສວນຜູ້ປູກສາລີ, ປະສິດທິພາບການຜະລິດ, ການວິເຄາະການຫໍ່ຫຸ້ມຂໍ້ມູນ.

# Impact of Access to Credit on Agricultural Production Efficiency A Case study: Maize Farmers in Oudomxay Province

The study of the impact of access to credit on agricultural production efficiency: a case study of maize farmers in Oudomxay province. The objectives is to study the impact of access to credit on agricultural production efficiency among maize farmers in Udomxay province. The data was collected from a sample of 396 maize farmers in Udomxay province, using a DEA (Data Envelopment Analysis) method to estimate technical efficiency and analyze the relationship between access to credit and agricultural production efficiency using a probit regression model. The study found that factors such as ethnicity, membership in production groups, residence in Giwyab village, ownership of external assets, gender, age, and natural disasters significantly impact access to credit for maize farmers in Udomxay Province, At the same time the household membership, area of cultivated land, residence in Phonsai village, and residence in Samka village do not significantly affect access to credit. The analysis of the impact of access to credit on agricultural production efficiency shows that access to credit positively influences the productivity of maize farmers in Udomxay Province with a significance level of 0.05. The results indicate that if maize farmers can access to credit, it could lead to an increase in agricultural production efficiency by as much as 12.08% compared to those who cannot access to credit.

**Keywords**: Access to Credit, Maize Farmers, Production Efficiency, Data Envelopment Analysis.